
“ຂໍພຣະອົງຊົງ
ສຳແດງໃຫ້
ເຫັນເຖິງ
ສະຫງ່າຣາສີ
ຂອງພຣະອົງ
ເຖີດ”
ບົດຮຽນທີ 12 ສຳລັບ
ສະບາໂຕທີ 20, 2025



“ແລ້ວພຣະເຈົ້າຢາເວກໍ່ຍ່າງຜ່ານໂມເຊ
ໄປພ້ອມທັງປະກາດວ່າ: ພຣະເຈົ້າຢາ
ເວ ພຣະເຈົ້າຢາເວ ພຣະເຈົ້າອົງເຕັມ
ໄປດ້ວຍຄວາມເມດຕາແລະເຕັມລົ້ນ
ດ້ວຍພຣະຄຸນ ຜູ້ບໍ່ຮ້າຍງ່າຍ ແລະ ຜູ້
ສຳແດງຄວາມຮັກອັນໝັ້ນຄົງ ແລະ
ສັດຊື່. ເຮົາຮັກສາພັນທະສັນຍາຂອງ
ເຮົາຕະຫລອດໄປເຖິງພັນຊົ່ວເຊັ່ນຄົນ
ທັງຍົກຜິດບາບໃຫ້ດ້ວຍ; ແຕ່ເຮົາບໍ່
ອາດຈະລືມລົງໂທດລູກຫລານຂອງຜູ້ທີ່
ໄດ້ເຮັດບາບຕໍ່ສູ້ເຮົາເຖິງສາມ ແລະ ສີ່
ຊົ່ວເຊັ່ນຄົນ”

ອພຍ 34:6, 7

ພຣະເຈົ້າແລະໂມເຊກາຍມາເປັນເພື່ອສະໜິດຕໍ່ກັນຢ່າງບໍ່ມີຄວາມສົງໄສເລີຍວ່າ ເປັນຫຍັງ

ສິ່ງນີ້ບໍ່ໄດ້ເກີດຂຶ້ນພຽງຄ່ຳຄືນດຽວ. ມັນເກີດຂຶ້ນດ້ວຍຂະບວນການນ້ອຍໆກ່ອນ. ເລີ່ມຕັ້ງແຕ່ຊ່ວງໂມເຊເປັນເດັກນ້ອຍ, ຕອນທີ່ແມ່ຂອງລາວໄດ້ບອກກ່ຽວ ກັບພຣະເຈົ້າໃຫ້ລາວຟັງ.

ມິດຕະພາບຂອງພວກເຂົາແໜ້ນແຟ້ນຫລາຍຍິ່ງຂຶ້ນ ຈາກການພົບປະກັນຫລາຍ ຄັ້ງທີ່ພູເຂົາຊີນາຍ ແລະ ຍັງເຕີບໂຕຢ່າງຕໍ່ເນື່ອງ ຈົນເຖິງວັນທີ່ພຣະເຈົ້າໄດ້ໃຫ້ ໂມເຊພັກຜ່ອນຈາກວຽກງານທັງໝົດ.

ບົດທີ 33 ແລະບົດທີ 34 ຂອງພຣະທຳອົບພະຍົບໄດ້ບັນທຶກຊ່ວງເວລາພິເສດ ໃນຄວາມສຳພັນອັນແໜ້ນແຟ້ນນັ້ນກໍຄື: ໂມເຊໄດ້ຮ້ອງຂໍທີ່ຈະເຫັນສະຫງ່າຣາສີ ຂອງພຣະເຈົ້າ





- ພຣະເຈົ້າ ແລະ ໂມເຊ:
  - ການພົບປະ ກັບພຣະເຈົ້າ (ອພຍ 33:7-11)
  - ການຮູ້ຈັກພຣະເຈົ້າໃຫ້ດີກວ່າເກົ່າ (ອພຍ 33:12-17)
- ສະຫງ່າຣາສີຂອງພຣະເຈົ້າ:
  - ຄວາມປາຖະໜາທີ່ຈະເຫັນສະຫງ່າຣາສີຂອງພຣະເຈົ້າ (ອພຍ 33:18-23)
  - ນິມິດຂອງສະຫງ່າຣາສີຂອງພຣະເຈົ້າ (ອພຍ 34:1-28)
  - ຜົນຈາກການໄດ້ເຫັນສະຫງ່າຣາສີຂອງພຣະເຈົ້າ (ອພຍ 34:29-35)





# ພຣະເຈົ້າ
# ແລະ
# ໂມເຊ

# ການພົບປະກັບພຣະເຈົ້າ

“ຫລັງຈາກທີ່ໂມເຊໄດ້ເຂົ້າໄປໃນຫໍເຕັນແລ້ວ ໄດ້ມີເມກເປັນຮູບເສົາລອຍລົງມາ ແລະ ຢຸດຢູ່ທີ່ປະຕູເຂົ້າຫໍເຕັນ ແລະ ພຣະເຈົ້າຢາເວກໍກ່າວແກ່ໂມເຊຈາກເສົາເມກນັ້ນ” (ອພຍ 33:9)

ໂມເຊໄດ້ພົບກັບພຣະເຈົ້າໃນຫໍເຕັນ, ເຊິ່ງເປັນບ່ອນທີ່ໄດ້ລົມກັບພຣະເຈົ້າແບບໜ້າຕໍ່ໜ້າດັ່ງຄົນທີ່ກ່າວຕໍ່ເພື່ອນຂອງຕົນ (ອພຍ. 33:7-11).



ອະທິບາຍເພີ່ມ: ຄຳວ່າ “ໜ້າຕໍ່ໜ້າ” ບໍ່ໄດ້ໝາຍຄວາມວ່າໂມເຊເຫັນໜ້າຂອງພຣະເຈົ້າ, ແຕ່ໝາຍເຖິງການສົນທະນາທີ່ພວກເຂົາມີແມ່ນລື່ນໄຫລ, ສະໜິດ ຄືກັບເວົ້າຢູ່ຕໍ່ໜ້າກັນເຖິງວ່າໂມເຊຈະບໍ່ເຄີຍເຫັນໜ້າພຣະເຈົ້າກໍຕາມ).

ໂມເຊໄດ້ກາຍມາເປັນຜູ້ທີ່ຊື່ສັດຕໍ່ພຣະເຈົ້າ (ຮລ. 3:5), ເປັນເໝືອນເຄື່ອງຈຸດໄຟທີ່ບໍ່ມີວັນດັບໃນຄວາມມືດ ແລະ ເປັນຜູ້ເຜີຍພຣະວັດຈະນະທີ່ເປັນແບບຢ່າງ

## ຄວາມສຳພັນລະຫວ່າງພຣະເຈົ້າແລະໂມເຊ ຄ່ອຍໆແໜ້ນແຟ້ນຂຶ້ນ



ພຣະເຈົ້າຊົງດົນໃຈໃຫ້ໂມເຊຂຽນເລື່ອງລາວຂອງໂຢບ ແລະ ປະຖົມມະການ



ພຣະອົງຊົງເອີ້ນໂມເຊຈາກພຸ່ມໄມ້ທີ່ລຸກໄໝ້



ໂມເຊໄດ້ເຫັນເຖິງວິທີທີ່ພຣະເຈົ້າໄດ້ຊົງທຳລາຍຊາວເອຢິບ



He witnessed the parting of the Red Sea to free Israel



ໂມເຊເຝົ້າເບິ່ງພຣະເຈົ້າຊົງນຳຊາວອິດສະຣາເອນໄປສູ່ພູເຂົາຊີນາຍ



ພວກເຂົາອາໄສຢູ່ນຳກັນເປັນເວລາ 40 ມື້ທີ່ພູເຂົາຊີນາຍ



ຄວາມສຳພັນຂອງພວກເຂົາໄດ້ເຕີບໂຕເພີ່ມຂຶ້ນເລື້ອຍໆ

# ຮູ້ຈັກກັບພຣະເຈົ້າໃຫ້ດີຂຶ້ນກວ່າເກົ່າ

"ບັດນີ້ຖ້າພຣະອົງພໍໃຈນຳຂ້ານ້ອຍແທ້ແລ້ວ ຈົ່ງບອກແຜນການຂອງພຣະອົງໃຫ້ຂ້ານ້ອຍຮູ້ນຳແດ່ທ້ອນ ເພື່ອວ່າຂ້ານ້ອຍຈະໄດ້ຮັບໃຊ້ພຣະອົງຕໍ່ໄປ ແລະ ສືບຕໍ່ເຮັດໃຫ້ພຣະອົງພໍໃຈນຳຂ້ານ້ອຍຫລາຍຍິ່ງຂຶ້ນ." (ອພຍ 33:13)

ຕອນພຣະອົງບອກກັບໂມເຊວ່າ ພຣະອົງຈະບໍ່ສະເດັດໄປທີ່ຄານາອານກັບພວກເຂົາ (ອພຍ. 33:1-3), ການສົນທະນາທີ່ໜ້າສົນໃຈກໍເກີດຂຶ້ນ (ອພຍ. 33:12-17 ):

| | |
|---|---|
| ພຣະເຈົ້າ | ພຣະອົງຮູ້ຈັກເຈົ້າ, ດີໃຈ ແລະ ພໍໃຈ ນຳເຈົ້າ |
| ໂມເຊ | ຖ້າເປັນດັ່ງນັ້ນ ຂໍພຣະອົງຊົງບອກແຜນການຂອງພຣະອົງໃຫ້ຂ້ານ້ອຍຮູ້ແດ່ທ້ອນ |
| ພຣະເຈົ້າ | ເຮົາຈະນຳພາເຈົ້າໄປ ແລະ ເຈົ້າຈະໄດ້ຮັບການພັກຜ່ອນ |
| ໂມເຊ | ຖ້າພຣະອົງບໍ່ນຳພວກຂ້ານ້ອຍທັງຫລາຍໄປ ກໍຢ່າໃຫ້ພວກຂ້ານ້ອຍຍ້າຍອອກໄປຈາກທີ່ນີ້ເລີຍ |
| ໂມເຊ | ຖ້າພຣະອົງບໍ່ມາກັບພວກຂ້ານ້ອຍ ໃຜຈະຮູ້ວ່າພຣະອົງພໍໃຈນຳປະຊາຊົນຂອງພຣະອົງ |
| ພຣະເຈົ້າ | ເຮົາຈະເຮັດຕາມທີ່ເຈົ້າຂໍມາ ຍ້ອນວ່າເຮົາຮູ້ຈັກເຈົ້າດີ ແລະ ພໍໃຈນຳເຈົ້າ |

ໂມເຊໄດ້ໃຊ້ເວລາ 40 ວັນກັບພຣະເຈົ້າ, ໄດ້ຮັບພຣະບັນຍັດສິບປະການ ແລະ ຄຳແນະນຳໃນການສ້າງສະຖານນະມັດສະການ ຫລື ຫໍເຕັນ. ບັດນີ້ໂມເຊໄດ້ຢູ່ຕໍ່ໜ້າພຣະເຈົ້າອີກຄັ້ງໜຶ່ງ, ໄດ້ທູນຂໍ ວິງວອນແທນປະຊາຊົນ ແລະ ເບິ່ງຄືວ່າໂມເຊຈະຮູ້ຈັກກັບພຣະເຈົ້າເປັນຢ່າງດີ ເພາະໂມເຊໄດ້ສົນທະນາກັບພຣະອົງແບບຄຸ້ນເຄີຍ. ແລ້ວພວກເຮົາຄິດວ່າ ໂມເຊຄວນຈະຮູ້ຈັກກັບພຣະເຈົ້າແບບໃດ(ອພຍ. 33:13)? ພວກເຮົາຄິດວ່າພວກເຮົາຄວນຮູ້ຈັກກັບພຣະເຈົ້າແບບໃດ?



# ສະຫງ່າຣາສີ
# ຂອງພຣະເຈົ້າ

# ຄວາມປາຖະໜາທີ່ຈະໄດ້ຮູ້ເຖິງສະຫງ່າຣາສີຂອງພຣະເຈົ້າ

"ແລ້ວໂມເຊກໍຮ້ອງຂໍວ່າ, 'ຂໍຊົງໂຜດໃຫ້ຂ້ານ້ອຍໄດ້ເຫັນແສງສຸກໃສແຫ່ງສະຫງ່າຣາສີຂອງພຣະອົງແດ່ທ້ອນ.' " (ອພຍ 33:18)



ໂມເຊໄດ້ຮ້ອງຂໍວ່າ: ຂໍພຣະອົງໃຫ້ຂ້ານ້ອຍໄດ້ເຫັນ ...ສະຫງ່າຣາສີຂອງພຣະອົງ (ອພຍ. 33:18)

\+

ພຣະອົງໄດ້ຕອບວ່າ: ເຮົາຈະໃຫ້ເຈົ້າໄດ້ເຫັນ ຄຸນງາມຄວາມດີທັງໝົດຂອງເຮົາ(ອພຍ. 33:19)

\+

ສິ່ງທີ່ພຣະອົງສຳແດງໃຫ້ໂມເຊເຫັນກໍ່ຄື ລັກສະນະ ນິໄສຂອງພຣະອົງ (ອພຍ. 34:6-7)

→ **ສະຫງ່າຣາສີຂອງພຣະອົງຄື ຄຸນງາມຄວາມດີ, ກໍ່ຄືລັກສະນະນິໄສຂອງພຣະອົງ**

ທ່ານນາງເອເລັນຈີໄວ້ ໄດ້ກ່າວເສີມວ່າ; ສະຫງ່າຣາສີຂອງພຣະອົງຍັງລວມໄປເຖິງການເສີມກຳລັງໃຫ້ກັບບຸດຂອງພຣະອົງ ກໍ່ຄືຜູ້ຄົນໃນຄວາມເຊື່ອ, ການຍອມຮັບຄົນບາບທີ່ກັບໃຈ ແລະ ການຈັດຕຽມທຸກສິ່ງທີ່ຈຳເປັນສຳລັບການປ່ຽນແປງຂອງມະນຸດ.

ດັ່ງນັ້ນ "ສະຫງ່າຣາສີ" ຂອງພວກເຮົາກໍ່ຄືການສະທ້ອນພຣະລັກສະນະຂອງພຣະເຈົ້າໃນຊີວິດຂອງພວກເຮົາ (2 ຄລທ. 1:12; 3:18).

ເມື່ອພວກເຮົາເບິ່ງໄປທີ່ໄມ້ກາງແຂນ, ພວກເຮົາມີການເປີດເຜີຍທີ່ຍິ່ງໃຫຍ່ທີ່ສຸດ ກ່ຽວກັບສະຫງ່າຣາສີຂອງພຣະອົງ ນັ້ນກໍ່ຄື ຄຸນຄວາມດີຂອງພຣະອົງ

# ນິມິດຂອງສະຫງ່າຣາສີຂອງພຣະເຈົ້າ

"ແລ້ວພຣະເຈົ້າກໍຍ່າງຜ່ານໂມເຊໄປພ້ອມທັງປະກາດວ່າ ພຣະເຈົ້າຢາເວ ພຣະເຈົ້າຢາເວ ພຣະເຈົ້າອົງເຕັມໄປດ້ວຍຄວາມເມດຕາ ແລະ ເຕັມລົ້ນດ້ວຍພຣະຄຸນ ຜູ້ບໍ່ຮ້າຍງ່າຍ ແລະ ຜູ້ສຳແດງຄວາມຮັກອັນໝັ້ນຄົງແລະສັດຊື່" (ອພຍ 34:6)

ພຣະເຈົ້າຊົງສຳແດງສະຫງ່າຣາສີຂອງພຣະອົງໃຫ້ແກ່ໂມເຊໃນຄັ້ງທີ 7 ຕອນທີ່ລາວໄດ້ຂຶ້ນໄປທີ່ພູເຂົາຊີນາຍ. ໂມເຊໄດ້ປາກົດຕົວຕໍ່ພຣະເຈົ້າໃນຕອນໃດ ແລະ ເພື່ອຫຍັງ?

1. ເພື່ອຮັບເອົາຮາກຖານແຫ່ງພັນທະສັນຍາ (ອພຍ. 19:3-7)
2. ເພື່ອເປັນການຕອບສະໜອງຕໍ່ປະຊາຊົນ ແລະ ຮັບຄຳແນະນຳກ່ຽວກັບການສະແດງສະຫງ່າຣາສີຂອງພຣະເຈົ້າ (ອພຍ. 19:8-14)
3. ເພື່ອຮັບຄຳສັ່ງໃໝ່ (ອພຍ. 19:20-25)
4. ເພື່ອຮັບກົດບັນຍັດທີ່ເສີມສ້າງເຊິ່ງກັນແລະກັນ (ອພຍ. 20:21; 24:3)
5. ເພື່ອຮັບເອົາພຣະບັນຍັດສິບປະການທີ່ຂຽນຂຶ້ນໂດຍນິ້ວມືຂອງພຣະອົງ ແລະ ແບບແຜນຂອງຫໍເຕັນສັກສິດ (ອພຍ. 24:12, 18; 32:15)
6. ເພື່ອວິງວອນຂໍການອະໄພຄວາມບາບຂອງການຫລໍ່ງສ້າງຮູບເຄົາລົບງົວຄຳ(ອພຍ. 32:30)
7. ເພື່ອພຣະເຈົ້າຈະໄດ້ຊົງສຳແດງສະຫງ່າຣາສີຂອງພຣະອົງ ແລະຮັບແຜ່ນຈາລຶກໃໝ່ທີ່ມີພຣະບັນຍັດສິບປະການ (ອພຍ. 34:1-5)



ນິມິດແຫ່ງສະຫງ່າຣາສີຂອງພຣະເຈົ້າ ເປັນການປະກາດເຖິງພຣະລັກສະນະຂອງພຣະອົງເອງ (ອພຍ. 34:6-7). ເມື່ອໂມເຊໄດ້ເຫັນຄວາມຮັກຂອງພຣະເຈົ້າແບບຊ່ວງເວລານັ້ນ ລາວກໍ່ໄດ້ກົ້ມຂາບນະມັດສະການ(ອພຍ 34:8; 1 ຢຮ 4:19). ໃນທີ່ສຸດພຣະເຈົ້າກໍໄດ້ສືບຕໍ່ພັນທະສັນຍາອີກຄັ້ງ ແລະ ໃຫ້ອະໄພແກ່ຊາວອິດສະຣາເອນໃນເລື່ອງການສ້າງຮູບງົວຄຳນັ້ນ

# ຜົນຈາກການໄດ້ເຫັນສະຫງ່າຣາສີຂອງພຣະເຈົ້າ

"ເມື່ອໂມເຊຖືແຜ່ນຫີນທີ່ບັນຈຸກົດບັນຍັດສິບປະການລົງມາຈາກພູເຂົາຊີນາຍ ເພິ່ນບໍ່ໄດ້ຮູ້ເມື່ອວ່າ ໜ້າຂອງຕົນສ່ອງແສງ ເຫລື້ອມ ເພາະຕົນໄດ້ກ່າວກັບພຣະເຈົ້າ (ອພຍ 34:29)



ໂມເຊເຄີຍສົນທະການກັບພຣະເຈົ້າແບບ "ໜ້າຕໍ່ໜ້າ" ກ່ອນໜ້ານັ້ນແລ້ວ, ແຕ່ວ່າຄັ້ງນີ້ ໃບໜ້າຂອງລາວມີແສງເປັ່ງປະກາຍ. ເປັນຫຍັງຈຶ່ງເປັນແບບນີ້? ແລະ ການປ່ຽນແປງ ຄັ້ງນີ້ຍັງຄົງດຳເນີນຕໍ່ໄປ ເປັນໄລຍະຍາວ (ອພຍ . 34:34-35).

ຕອນນີ້ໂມເຊໄດ້ຮູ້ຈັກກັບພຣະເຈົ້າຫລາຍ ຂຶ້ນ. ມິດຕະພາບຂອງລາວເຕີບໂຕ ເຕັມທີ່. ລາວໄດ້ຕະໜັກເຖິງສະຫງ່າຣາສີ ຂອງພຣະເຈົ້າ ແລະໄດ້ຖືກປ່ຽນໂດຍ ສະຫງ່າຣາສີຂອງພຣອົງ.



ເພື່ອສະທ້ອນເຫດການນີ້, ອຈ ໂປໂລໄດ້ຊວນໃຫ້ພວກເຮົາຮຽນຮູ້ຈາກໂມເຊ ໃນການຕະໜັກ ເຖິງສະຫງ່າຣາສີຂອງພຣະອົງ ທີ່ຈະປ່ຽນແປງພວກເຮົາໄປໃນແບບທີ່ພຣະອົງຢາກໃຫ້ພວກ ເຮົາເປັນ (2 ຄລທ 3:12-18).

ໂມເຊແມ່ນແບບຢ່າງທີ່ສະແດງໃຫ້ເຫັນວ່າ ພຣະເຈົ້າຊົງເຮັດຫລາຍໆສິ່ງເພື່ອພວກເຮົາໄດ້, ຖ້າວ່າພວກເຮົາຍອມໃຫ້ພຣະອົງປ່ຽນແປງນິໄສຂອງພວກເຮົາ ແລະ ຫລໍ່ຫລອມພວກເຮົາ ໃຫ້ ກາຍເປັນສາວົກຂອງພຣະອົງ.

“ພວກເຮົາຄິດວ່າພຣະເຈົ້າຈະຊົງຕຳໜິໂມເຊເລື່ອງຄວາມທະນົງໂຕຂອງລາວຫລືບໍ່? ບໍ່ເລີຍ, ໂມເຊບໍ່ໄດ້ຮ້ອງຂໍໃນເລື່ອງນີ້ດ້ວຍຄວາມຢາກຮູ້ຢາກເຫັນ, ລາວມີເປົ້າໝາຍຢູ່ໃນໃຈ, ລາວເຫັນວ່າບໍ່ສາມາດເຮັດວຽກງານຂອງພຣະເຈົ້າໄດ້ດ້ວຍກຳລັງຂອງຕົນ. ລາວຮູ້ວ່າຖ້າວ່າລາວສາມາດເບິ່ງເຫັນສະຫງ່າຣາສີຂອງພຣະເຈົ້າໄດ້ຢ່າງຊັດເຈນ ລາວຈະສາມາດກ້າວໄປຂ້າງໜ້າໃນການເຮັດພັນທະກິດອັນສຳຄັນນີ້ໄດ້. ບໍ່ແມ່ນດ້ວຍກຳລັງຂອງຕົນເອງ ແຕ່ແມ່ນດ້ວຍກຳລັງຂອງອົງພຣະຜູ້ເປັນເຈົ້າ ຜູ້ຊົງຣິດທານຸພາບຈິດວິນຍານທັງໝົດຂອງລາວ ແມ່ນປາຖະໜາທີ່ຈະຮູ້ຈັກກັບພຣະເຈົ້າຫລາຍຂຶ້ນອີກ. ເພື່ອທີ່ຈະໄດ້ຮັບຮູ້ເຖິງການສະຖິດຢູ່ຂອງພຣະເຈົ້າ ໃນທຸກໆສະຖານະການ ບໍ່ວ່າຈະສຸກເສີນ ຫລື ສັບສົນ. ບໍ່ແມ່ນໂມເຊເຫັນແກ່ໂຕ ຫລື ທະນົງໂຕທີ່ຢາກຈະເຫັນສະຫງ່າຣາສີຂອງພຣະເຈົ້າ ແຕ່ເປົ້າໝາຍຂອງລາວກໍຄື ຄວາມປາຖະໜາທີ່ຈະຖວາຍກຽດແກ່ພຣະຜູ້ສ້າງຂອງລາວ ໃຫ້ດີຍິ່ງຂຶ້ນ.